**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສາທາລະນະສຸກແຂວງ ເລກທີ.....1737...... /ສທຂ

ແຂວງສະຫວັນນະເຂດ, ວັນທີ 04 ພຶດສະພາ 2026

ຊື່ໂຄງການ : ໂຄງການ ກໍ່ສ້າງ ໂຮງໝໍເມືອງຊົນນະບູລີ

ສັນຍາເລກທີ :.................. :

## ໜັງສືແຈ້ງເຊີນປະມູນ

1) ພະແນກ ພະແນກສາທາລະນະສຸກແຂວງ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບການກໍ່ສ້າງ ໂຄງການ ກໍ່ສ້າງ ໂຮງໝໍເມືອງຊົນນະບູລີ ໄລຍະການກໍ່ສ້າງ [ຈຳນວນ 36 ເດືອນ (3 ປີ)].

2) ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019.

3) ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ 2026 ຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ .

4) ບໍລິສັດທີ່ມີຄຸນນະວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ເບີໂທ 020 22884868 ອີ-ເມວ Lamphay344@gmail.com ຜູ້ຮັບຜິດຊອບ ກໍ່ສ້າງ-ສ້ອມແປງ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ພະແນກ ພະແນກການເງິນແຂວງ; ໃນວັນເວລາເຮັດວຽກ.

5) ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ້ມແຕ່ ວັນທີ 04/05/2026 ເປັນຕົ້ນໄປ ຈົນຮອດ ວັນທີ 29/05/2026, ໃນລາຄາ ຈຳນວນເງິນ 2,500,000ກີບ/ຊອງ ຫລື ເປັນສະກຸນເງິນອື່ນທຽບເທົ່າ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນເງິນສົດ ຫລື ແຊກເງິນສົດ.

6) ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາ [ເວລາ 9:00, ວັນທີ 03/06/2026 ແລະ ສະຖານທີ່ກຳນົດໃນການຍື່ນຊອງປະມູນທີ່ ພະແນກສາທາລະນະສຸກແຂວງ, ການເປີດຊອງປະມູນຈະເປີດໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ເຂົ້າຮ່ວມ.

7) ທຸກໆ ຊອງປະມູນຕ້ອງໄດ້ ມີໜັງສືຄ້ຳປະກັນການປະມູນດ້ວຍກຽດ ຫລື ໜັງງສືຄ້ຳປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ.

8) ການຍື່ນຊອງປະມູນຕ້ອງເຮັດເປັນ 02 ຊອງ ຄື : 1). ຊອງເງື່ອນໄຂການປະມູນ; 2). ຊອງລາຄາທີ່ສະເໜີ ຫຼື (ໃບຄິດໄລ່ລາຄາການກໍ່ສ້າງ).

ຫົວໜ້າພະແນກສາທາລະນະສຸກແຂວງ

ດຣ. ຈັນທະລາ ພານິສິດ



สแกนด้วย CamScanner